ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເລກທີ 1040 /ກສ

ນະຄອນຫຼວງວຽງຈັນ, ວັນທີ 29 AUG 2025

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ການຕົກລົງ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄັ້ງວັນທີ 29 ສິງຫາ 2025.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ແນໃສ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ບໍລິຫານ ແລະ ພັດທະນາທີ່ດິນ ໃນຂອບເຂດທົ່ວປະເທດ ໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິພາບສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ຂຽນເປັນຕົວອັກສອນຫຍໍ້ວ່າ **"ກຄພດ"** ແມ່ນກົງຈັກການຈັດຕັ້ງໜຶ່ງຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ, ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງ ແລະ ພັດທະນາທີ່ດິນ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ມີໜ້າທີ່ ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນ ຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ຄົ້ນຄວ້າ, ເຊື່ອມຊຶມ ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເປັນແຜນງານ ແລະ ໂຄງການສະເພາະ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
3. ຄົ້ນຄວ້ານຳສະເໜີ, ສ້າງ, ປັບປຸງ ນິຕິກຳ, ລະບຽບການນຳໃຊ້, ການຄຸ້ມຄອງທີ່ດິນ, ການພັດທະນາທີ່ດິນ ພ້ອມທັງປະສານສົມທົບກັບພາກສວນກ່ຽວຂ້ອງ ຄົ້ນຄວ້າ ແລະ ຜັນຂະຫຍາຍ ເປັນນະໂຍບາຍ ແລະ ລະບຽບການໃນການຄຸ້ມຄອງ ແລະ ພັດທະນາທີ່ດິນ ແລະ ຈັດຕັ້ງການໂຄສະນາ, ເຜີຍແຜ່ນິຕິກຳອອກສູ່ສັງຄົມ ຢ່າງທົ່ວເຖິງ;
4. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ, ດຳເນີນການສຳຫຼວດ, ຈັດສັນທີ່ດິນແຕ່ລະປະເພດ, ຈັດແບ່ງປະເພດການນຳໃຊ້ທີ່ດິນ ແລະ ສະຫຼຸບລາຍງານ ໃນແຕ່ລະໄລຍະ;
5. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການດຳເນີນການສຳຫຼວດ, ເກັບກຳຂໍ້ມູນເນື້ອທີ່ດິນ 8 ປະເພດ ແລະ ຂຶ້ນທະບຽນອອກໃບຕາດິນ ທັງເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການສ້າງ ແລະ ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນແຕ່ລະປະເພດ, ຊຸກຍູ້ບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ໃນການສ້າງຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນ ທີ່ຕົນເອງຄຸ້ມຄອງ;
6. ເປັນໃຈກາງໃນການສຳຫຼວດ, ສຶກສາ, ຈຳແນກ ແລະ ປະເມີນຄຸນນະພາບດິນ, ປະເມີນຄວາມເໝາະສົມຂອງທີ່ດິນ, ສະຫງວນ ແລະ ປົກຫຼັກໝາຍ, ດິນຖ່ານຕົມ ແລະ ຈັດແບ່ງເຂດການຜະລິດຕິດພັນກັບການປູກແຕ່ງ (ເຂດປູກ, ເຂດລ້ຽງ) ເພື່ອສົ່ງເສີມການຜະລິດພາຍໃນ, ທົດແທນການນຳເຂົ້າ ແລະ ການຜະລິດເພື່ອສົ່ງອອກ ພ້ອມທັງຊຸກຍູ້ຜັນຂະຫຍາຍວຽກງານນິເວດກະສິກຳ ແລະ ວຽກງານກະສິກຳອະນຸລັກ ໃນ ສປປ ລາວ;
7. ເປັນໃຈກາງໃນການໃຫ້ບໍລິການວິໄຈດິນ ແລະ ຝຸ່ນ, ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາໂຮງງານຜະລິດຝຸ່ນຊີວະພາບ, ຝຸ່ນອິງຄະທາດ ແລະ ໂຮງງານຝຸ່ນວິທະຍາສາດ, ຄົ້ນຄ້ວາທົດລອງການຜະລິດຝຸ່ນ, ສ້າງແຜນການດຸນດ່ຽງຝຸ່ນ ໃນຂອບເຂດທົ່ວປະເທດ;
8. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານຜະລິດຝຸ່ນຊີວະພາບ, ຝຸ່ນອິງຄະທາດ ແລະ ໂຮງງານຝຸ່ນວິທະຍາສາດ, ຄົ້ນຄ້ວາທົດລອງການຜະລິດຝຸ່ນ, ສ້າງແຜນການດຸ່ນດ່ຽງຝຸ່ນ ໃນຂອບເຂດທົ່ວປະເທດ; ຄຸ້ມຄອງ, ຕິດຕາມ, ກວດກາ, ການບໍລິການ, ການຜະລິດຝຸ່ນ ແລະ ດິນປູກ ຂອງໂຮງງານ, ຜູ້ປະກອບການ ແລະ ກຸ່ມຊາວກະສິກອນ;

9. ຄົ້ນຄວ້າ, ທົດລອງ ແລະ ສາທິດຮູບແບບການນຳໃຊ້ທີ່ດິນກະສິກຳ, ການພັດທະນາທີ່ດິນກະສິກຳ, ດິນບໍລິເວນນ້ຳ, ດິນຖ່ານຕົມ, ຟື້ນຟູດິນເຊື່ອມໂຊມ, ການນຳໃຊ້ຝຸ່ນຕ່າງໆ ໃຫ້ຖືກຕ້ອງກັບສະພາບຂອງດິນ ຢູ່ໃນແຕ່ລະເຂດການຜະລິດ, ກວດກາ, ຕິດຕາມການນຳໃຊ້ຝຸ່ນ ແລະ ຮັບຮອງຄູນນະພາບຝຸ່ນ;

10. ຄຸ້ມຄອງການນຳໃຊ້ທີ່ດິນຂອງລັດ ດ້ວຍການຂຶ້ນບັນຊີ ແລະ ຂຶ້ນທະບຽນອອກໃບຕາດິນລັດ ທີ່ຢູ່ໃນການຄຸ້ມຄອງ, ການນຳໃຊ້ ຂອງອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການປົກຄອງທ້ອງຖິ່ນ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ລວມໝູ່ ທີ່ນຳໃຊ້ທີ່ດິນຂອງລັດ ແລະ ທີ່ດິນທີ່ສານຕັດສິນຮິບເປັນຂອງລັດ ຫຼື ໃຫ້ລັດ ເປັນຜູ້ຄຸ້ມຄອງ; ຄົ້ນຄວ້ານຳສະເໜີການມອບສິດນຳໃຊ້ທີ່ດິນຂອງລັດ; ປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນ ເພື່ອຕິດຕາມ, ກວດກາ ແລະ ປະເມີນຜົນ ການນຳໃຊ້ທີ່ດິນຂອງລັດ, ຄົ້ນຄວ້າການຖອນສິດນຳໃຊ້ທີ່ດິນ ຂອງລັດ ແລະ ພິຈາລະນາການນຳສະເໜີແຜນຈັດສັນນຳໃຊ້ທີ່ດິນຂອງລັດ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ;

11. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຕິດຕາມ, ກວດກາ, ຄົ້ນຄວ້າ ແລະ ນຳສະເໜີ ການຊື້-ຂາຍ ສິດນຳໃຊ້ທີ່ດິນຈັດສັນ ຂອງລັດແບບມີກຳນົດໃຫ້ ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດ ທີ່ເປັນເຊື້ອຊາດລາວ;

12. ຊີ້ນຳ ແລະ ຊຸກຍູ້, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນວຽກງານ ການຂຶ້ນທະບຽນອອກໃບຕາດິນ, ອອກໃບຢັ້ງຢືນການນຳໃຊ້ທີ່ດິນ, ຢັ້ງຢືນການພັດທະນາທີ່ດິນ, ໃບແຜນທີ່ດິນ, ການສ້າງສຳມະໂນທີ່ດິນ, ປະເມີນລາຄາທີ່ດິນ, ຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ ແລະ ການຂຶ້ນທະບຽນທີ່ດິນ ເພື່ອປຸກສ້າງຄອນໂດມີນຽມ;

13. ຄຸ້ມຄອງ, ປະສານງານກັບພາກສ່ວນກ່ຽວຂ້ອງ ໃນການສຳຫຼວດວັດແທກສ້າງແຜນທີ່ຕາດິນ, ອອກໃບຢັ້ງຢືນ ການນຳໃຊ້ທີ່ດິນ, ສິດໃຊ້ທີ່ດິນ, ໃບຕາດິນ, ຢັ້ງຢືນ ຂອບເຂດເຊົ່າສຳປະທານທີ່ດິນ, ເຂດສະຫງວນທີ່ດິນຂອງລັດ, ຂອບເຂດທີ່ດິນປ່າໄມ້, ສ້າງແຜນທີ່ຄວາມອຸດົມສົມບູນຂອງດິນ, ແຜນທີ່ຄວາມເໝາະສົມຂອງທີ່ດິນ ແລະ ພືດ ແລະ ການປະເມີນລາຄາທີ່ດິນ.

14. ຄົ້ນຄວ້າ ແລະ ນຳສະເໜີ ໃນການອະນຸຍາດ, ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານທຸລະກິດ ກ່ຽວກັບທີ່ດິນ, ຄອນໂດມີນຽມ ທີ່ຕິດພັນກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການ;

15. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຕິດຕາມ, ກວດກາ, ຄົ້ນຄວ້າ ແລະ ນຳສະເໜີ ຢັ້ງຢືນສິດການນຳໃຊ້ທີ່ດິນຂອງລັດ ແລະ ຂອງພົນລະເມືອງລາວ ເພື່ອໃຫ້ເຊົ່າ ແລະ ສຳປະທານ ໃຫ້ເຊົ່າທີ່ດິນ ລະຫວ່າງພົນລະເມືອງລາວກັບພົນລະເມືອງລາວ, ພົນລະເມືອງລາວກັບຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງດ້າວ ແລະ ໂຄງການລົງທຶນພັດທະນາ ໃນຂອບເຂດທົ່ວປະເທດ;

16. ຄົ້ນຄວ້າ, ແກ້ໄຂ ຂໍ້ຂັດແຍ່ງທີ່ດິນ ແລະ ຄຳຮ້ອງຟ້ອງ ກ່ຽວກັບທີ່ດິນ ທີ່ນອນຢູ່ໃນຄວາມຮັບຜິດຊອບຂອງຕົນ, ເຂົ້າຮ່ວມ ແລະ ໃຫ້ຄຳຄິດເຫັນແກ່ອົງການຈັດຕັ້ງທີ່ມີສິດອຳນາດ ໃນການແກ້ໄຂຂໍ້ຂັດແຍ່ງທີ່ດິນ ທີ່ມີລັກສະນະທາງແພ່ງ ແລະ ທາງອາຍາ ທີ່ພົວພັນເຖິງການນຳໃຊ້ທີ່ດິນ ໃນຂອບເຂດທົ່ວປະເທດ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການນຳໃຊ້ທີ່ດິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ຖືກຕ້ອງຕາມເປົ້າໝາຍ, ລະບຽບກົດໝາຍ ແລະ ມີປະສິດທິຜົນ;

17. ສ້າງ ແລະ ພັດທະນາ, ຄຸ້ມຄອງລະບົບຂໍ້ມູນຂ່າວສານທີ່ດິນ ດ້ວຍການສ້າງຖານຂໍ້ມູນ ກ່ຽວກັບທີ່ດິນ ທີ່ນໍາໃຊ້ລະບົບດີຈີຕອນ ທີ່ກ້າວໜ້າ ແລະ ທັນສະໄໝ ເຊື່ອມຕໍ່ກັບພາກສ່ວນທີ່ກ່ຽວຂ້ອງ ໃນລະດັບສູນກາງ ແລະ ທ້ອງຖິ່ນ ເຮັດໃຫ້ການບໍລິການມີຄວາມສະດວກ, ວ່ອງໄວ ແລະ ຮັບປະກັນ;
18. ສັງລວມ, ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ປະຈໍາເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ປະຈໍາປີ, ກາງສະໄໝ ແລະ 5 ປີ ຂອງກົມ ໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;
19. ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນນິຕິກໍາອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນໍາ.

**ມາດຕາ 4 ຂອບເຂດສິດ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ມີສິດ ດັ່ງນີ້:

1. ອອກຂໍ້ຕົກລົງ, ຄໍາສັ່ງ, ແຈ້ງການ, ຄໍາແນະນໍາ ແລະ ຄູ່ມືດ້ານວິຊາການ, ເອກະສານຢັ້ງຢືນທາງດ້ານວິຊາການ ກ່ຽວກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ;
2. ຄົ້ນຄວ້າ, ສະເໜີຄະນະນໍາກະຊວງ ພິຈາລະນາອອກອະນຸຍາດ, ສັ່ງໂຈະ ຫຼື ຍົກເລີກກິດຈະກໍາໃດໜຶ່ງ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາທີ່ດິນ;
3. ໃຫ້ບໍລິການທາງດ້ານວິຊາການ ໃນການສໍາຫຼວດ-ວັດແທກ, ວິໄຈດິນ ແລະ ຝຸ່ນ ແລະ ຂໍ້ມູນຂ່າວສານກ່ຽວກັບທີ່ດິນ;
4. ຮ່າງໜັງສືສະເໜີ, ບົດປະກອບຄໍາເຫັນ, ບັດເຊີນ, ສະໂນດນໍາສົ່ງ, ບົດລາຍງານ, ບົດບັນທຶກ ແລະ ອື່ນໆທີ່ກ່ຽວຂ້ອງກັບວຽກງານທີ່ດິນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
5. ຄຸ້ມຄອງ, ນໍາໃຊ້ສໍານັກງານ, ວັດຖຸອຸປະກອນ, ພາຫະນະຂອງລັດ, ງົບປະມານ ແລະ ລາຍຮັບວິຊາການຕາມລະບຽບການ;
6. ສະເໜີປັບປຸງການຈັດຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕໍາແໜ່ງ, ເລື່ອນຊັ້ນ, ເລື່ອນຂັ້ນ, ຍ້ອງຍໍ, ປະຕິບັດວິໄນ ແລະ ປະຕິບັດນະໂຍບາຍຕ່າງໆ ຕໍ່ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
7. ຈັດຈ້າງຊ່ຽວຊານ, ພະນັກງານຕາມສັນຍາ ຫຼື ແຮງງານຊົ່ວຄາວ ລວມທັງອາສາສະໝັກ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຊ່ວຍ ແລະ ຮັບໃຊ້ວຽກງານວິຊາສະເພາະຕາມສັນຍາ ແລະ ແຫຼ່ງທຶນຂອງໂຄງການ ຫຼື ຕາມຄວາມຈໍາເປັນ;
8. ສະເໜີແຕ່ງຕັ້ງ ແລະ ມອບໃຫ້ພະນັກງານເຂົ້າຮ່ວມກອງປະຊຸມ, ສໍາມະນາ, ຝຶກອົບຮົມ, ທັດສະນະສຶກສາ ຢູ່ພາຍໃນ ແລະ ຕ່າງປະເທດ, ເຈລະຈາ ແລະ ເຊັນສັນຍາ, ອານຸສັນຍາ, ບົດບັນທຶກຄວາມເຂົ້າໃຈ ແລະ ຂໍ້ຕົກລົງຕ່າງໆກັບອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດທີ່ພົວພັນກັບວຽກງານທີ່ດິນຕາມການມອບໝາຍຂອງຄະນະນໍາກະຊວງ;
9. ປະຕິບັດສິດອື່ນ ຕາມທີ່ກໍານົດໄວ້ໃນນິຕິກໍາອື່ນ ແລະ ການມອບໝາຍຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນໍາ.

## ໝວດທີ 3
## ໂຄງປະກອບດ້ານການຈັດຕັ້ງ

**ມາດຕາ 5 ໂຄງປະກອບດ້ານກົງຈັກ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ມີໂຄງປະກອບກົງຈັກ ດັ່ງນີ້:

1. ພະແນກສັງລວມ
2. ພະແນກຈັດສັນ ແລະ ວາງແຜນນຳໃຊ້ທີ່ດິນ
3. ພະແນກຄຸ້ມຄອງທະບຽນທີ່ດິນ ແລະ ປະເມີນລາຄາທີ່ດິນ
4. ພະແນກຄຸ້ມຄອງທີ່ດິນລັດ
5. ພະແນກຄຸ້ມຄອງທຸລະກິດທີ່ດິນ
6. ສູນຂໍ້ມູນຂ່າວສານທີ່ດິນ
7. ສູນສຳຫຼວດ-ວັດແທກ ແລະ ແຜນທີ່
8. ສູນພັດທະນາຄຸນນະພາບດິນ ແລະ ຝຸ່ນ
9. ສູນວິໄຈດິນ

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ມີໂຄງປະກອບດ້ານບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມ ຈຳນວນ 01 ທ່ານ ຮັບຜິດຊອບຕໍ່ ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານ ຂອງຕົນ.

   ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມທ່ານໃດໜຶ່ງ ຮັກສາການແທນ.

2. ຮອງຫົວໜ້າກົມຈຳນວນໜຶ່ງ ຊ່ວຍຫົວໜ້າກົມ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນຳ.

   ຮອງຫົວໜ້າກົມ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈຳການ.

3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ ຂອງບັນດາພະແນກ ແລະ ສູນ

**ມາດຕາ 7 ໜ້າທີ່ ຂອງພະແນກສັງລວມ**

ພະແນກສັງລວມ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍ, ຍຸດທະສາດ, ມະຕິ, ຄຳສັ່ງ ຂອງພັກ, ກົດໝາຍ ແລະ ນິຕິກຳຕ່າງໆ ຂອງລັດ ແລະ ຂອງກະຊວງ ວາງອອກ ໃຫ້ໄດ້ຮັບຜົນດີ;
2. ສ້າງ ແລະ ສັງລວມ ແຜນການ, ລາຍຮັບ-ລາຍຈ່າຍງົບປະມານ ປະຈຳເດືອນ, ງວດ ແລະ ປີ ຂອງກົມ ເພື່ອນຳສະເໜີ ຄະນະກົມ ພິຈາລະນາ ສົ່ງໃຫ້ຫ້ອງການ ເອົາເຂົ້າແຜນການ ແລະ ແຜນງົບປະມານຂອງກະຊວງ;
3. ຕິດຕາມ, ປະເມີນຜົນ ແລະ ສະຫຼຸບການປະຕິບັດລາຍຮັບ-ລາຍຈ່າຍ ຂອງກົມ, ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເພື່ອລາຍງານຕໍ່ຂັ້ນເທິງ;
4. ຄົ້ນຄວ້າ, ສ້າງ, ປັບປຸງນະໂຍບາຍ, ກົດໝາຍ, ດຳລັດ, ຄຳສັ່ງ, ຄຳແນະນຳ, ມະຕິ ແລະ ນິຕິກຳຕ່າງໆ ກ່ຽວກັບວຽກງານຄຸ້ມຄອງທີ່ດິນ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
5. ເປັນໃຈກາງຕິດຕາມ, ໂຄສະນາ, ເຜີຍແຜ່ ແລະ ສ້າງຈິດສຳນຶກ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບນະໂຍບາຍ, ກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວກັບທີ່ດິນ ຕາມທິດສ້າງລັດແຫ່ງກົດໝາຍ;
6. ເປັນໃຈກາງໃນການຝຶກອົບຮົມ ແລະ ສິດສອນ ດ້ານນະໂຍບາຍ, ກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວກັບທີ່ດິນ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຕາມການມອບໝາຍຂອງຂັ້ນເທິງ;
7. ເປັນໃຈກາງພົວພັນຮ່ວມມື ທັງພາຍໃນ ແລະ ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອຍາດແຍ່ງເອົາທຶນຮອນ, ເຕັກນິກ, ວິຊາການ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ;
8. ເປັນໃຈກາງປະສານສົມທົບກັບຄູ່ຮ່ວມພັດທະນາ ໃນການດຳເນີນງານ ໜ່ວຍງານຂະແໜງຍ່ອຍທີ່ດິນ (LSSWG), ວຽກງານຂະແໜງການຍ່ອຍນິເວດກະສິກຳໃນ ສປປລາວ (SSWG-AE), ນິເວດກະສິກຳໃນອາຊຽນ (Lao Facilitated Initiative on Agroecology in ASEAN ຫຼື LICA) ແລະ ຈັດຕັ້ງຜັນຂະຫຍາຍ ກອບການຮ່ວມມື ພາກພື້ນ ແລະສາກົນ ລວມທັງສົນທິສັນຍາ ແລະ ອະນຸສັນຍາ ທີ່ຕິດພັນກັບວຽກງານທີ່ດິນ ແລະ ນິເວດກະສິກຳ;
9. ຄຸ້ມຄອງ, ຂຶ້ນບັນຊີ ແລະ ນຳໃຊ້ ວັດຖຸອຸປະກອນ, ຕາປະທັບ, ເອກະສານເຂົ້າ-ອອກກົມ, ພາຫະນະ ແລະ ເຄື່ອງໃຊ້ຫ້ອງການ ພາຍໃນກົມ ຕາມລະບຽບການ;
10. ເປັນໃຈກາງປະສານສົມທົບກັບພະແນກການ ທີ່ກ່ຽວຂ້ອງພາຍໃນກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ເພື່ອຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ຂັ້ນສູນກາງ ແລະ ທ້ອງຖິ່ນ ຕາມສາຍຕັ້ງຂອງຕົນ;
11. ຕິດຕາມ ແລະ ຄຸ້ມຄອງ ພະນັກງານ-ລັດຖະກອນ ພາຍໃນກົມ ຕາມລະບຽບລັດຖະກອນ ເຊັ່ນ: ສະເໜີຂັ້ນເທິງເລື່ອນຊັ້ນ, ເລື່ອນຂັ້ນເງິນເດືອນ, ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດລະບຽບກົດໝາຍ ແລະ ອື່ນໆ;

12. ປະສານສົມທົບກັບບັນດາພະແນກຂອງກົມ ໃນການສັງລວມ, ສະຫຼຸບລາຍງານວຽກງານພົ້ນເດັ່ນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂອງພະແນກ ແລະ ວຽກງານຂອງກົມ ປະຈຳເດືອນ, 3 ເດືອນ, 6 ເດືອນ 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
13. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງພະແນກຈັດສັນ ແລະ ວາງແຜນນຳໃຊ້ທີ່ດິນ**

ພະແນກຈັດສັນ ແລະ ວາງແຜນນຳໃຊ້ທີ່ດິນ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍ, ຍຸດທະສາດ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍ ແລະ ນິຕິກຳຕ່າງໆຂອງລັດ ແລະ ຂອງກະຊວງວາງອອກ ໃຫ້ໄດ້ຮັບຜົນດີ;
2. ປະສານສົມທົບກັບພາກສວນກ່ຽວຂ້ອງ, ຜັນຂະຫຍາຍການຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ໃຫ້ເປັນແຜນງານ, ໂຄງການ ແລະ ກິດຈະກຳລະອຽດ;
3. ຊຸກຍູ້ອົງການປົກຄອງທ້ອງຖິ່ນ ດຳເນີນການສຳຫຼວດ, ຈັດສັນທີ່ດິນແຕ່ລະປະເພດ, ຈັດແບ່ງເຂດ, ຈັດແບ່ງປະເພດການນຳໃຊ້ທີ່ດິນ ໃນການສ້າງ ແລະ ຈັດຕັ້ງປະຕິບັດ ແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ;
4. ເປັນໃຈກາງໃນການສຳຫຼວດ, ຈັດສັນທີ່ດິນ, ກຳນົດແບ່ງເຂດການຜະລິດກະສິກຳ (ເຂດປູກ, ເຂດລ້ຽງ) ເປັນຕົ້ນເຂດປູກພືດອຸດສາຫະກຳ, ເຂດປູກພືດສະບຽງ, ເຂດປູກເຂົ້າ, ເຂດປູກໄມ້ໃຫ້ໝາກ, ເຂດປູກໄມ້ເສດຖະກິດ, ເຂດປູກພືດອາຫານສັດ, ເຂດລ້ຽງສັດໃຫຍ່ຕາມແລວທາງລົດໄຟລາວ-ຈີນ ແລະ ແລວທາງເສດຖະກິດ ເພື່ອຮັບໃຊ້ການລົງທຶນ ແລະ ວາງແຜນຊຸກຍູ້ ສົ່ງເສີມການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ ແລະ ການຜະລິດສິນຄ້າສົ່ງອອກ;
5. ເປັນໃຈກາງໃນການກຳນົດເຂດທີ່ດິນ ແລະ ວາງແຜນນຳໃຊ້ທີ່ດິນ ເປັນຕົ້ນ ທີ່ດິນກະສິກຳ, ທີ່ດິນປ່າໄມ້, ທີ່ດິນຖ່ານຕົມ, ທີ່ດິນບໍລິເວນນ້ຳ ແລະ ປັກຫຼັກໝາຍເຂດທີ່ດິນ ເພື່ອການຜະລິດກະສິກຳ, ຄຸ້ມຄອງອະນຸລັກ ເພື່ອການພັດທະນາອື່ນໆ ຕາມຄວາມເໝາະສົມ;
6. ເປັນໃຈກາງໃນການສຳຫຼວດ, ສຶກສາ, ຈຳແນກ ແລະ ປະເມີນຄຸນນະພາບດິນ, ປະເມີນຄວາມເໝາະສົມຂອງທີ່ດິນຕໍ່ການປູກພືດຊະນິດຕ່າງໆ, ສະຫງວນທີ່ດິນກະສິກຳ ແລະ ຈັດແບ່ງເຂດການຜະລິດຕິດພັນກັບການປຸງແຕ່ງ (ເຂດປູກ, ເຂດລ້ຽງ) ເພື່ອສົ່ງເສີມການຜະລິດພາຍໃນ, ທົດແທນການນຳເຂົ້າ ແລະ ການຜະລິດສິນຄ້າສົ່ງອອກ;
7. ຊຸກຍູ້ ບັນດາກະຊວງ ແລະ ຄະນະກຳມະການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຈິບັດແຜນນຳໃຊ້ທີ່ດິນ, ຍຸດທະສາດການນຳໃຊ້ທີ່ດິນ;
8. ຄົ້ນຄ້ວາຢັ້ງຢືນປະເພດທີ່ດິນ ແລະ ຕິດຕາມປະເມີນຜົນ ການຈັດຕັ້ງປະຈິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ;
9. ຄົ້ນຄວ້າ, ຕິດຕາມ ການຫັນປ່ຽນປະເພດທີ່ດິນ ຈາກທີ່ດິນປະເພດໜຶ່ງໄປເປັນທີ່ດິນປະເພດອື່ນ ພ້ອມທັງຄິດໄລ່ຄ່າທຳນຽມ;
10. ຊຸກຍູ້ ດຳເນີນການວາງແຜນ ຈັດສັນທີ່ດິນ ເພື່ອຍົກຍ້າຍ ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການທີ່ໄດ້ຮັບພັດທະນາ, ໄພພິບັດ ແລະ ອື່ນໆ;

11. ຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນ ການຈັດສັນ, ການວາງແຜນນຳໃຊ້ທີ່ດິນ, ຫ້ອງພິພິທະພັນດິນ ເປັນຕົ້ນ;
12. ຄຸ້ມຄອງ, ປັບປຸງ ແລະ ບຳລຸງຮັກສາ ຫ້ອງພິພິທະພັນດິນ;
13. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງພະແນກຄຸ້ມຄອງທະບຽນທີ່ດິນ ແລະ ປະເມີນລາຄາທີ່ດິນ**

ພະແນກຄຸ້ມຄອງທະບຽນທີ່ດິນ ແລະ ປະເມີນລາຄາທີ່ດິນ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍ, ຍຸດທະສາດ, ມະຕິ, ຄຳສັ່ງ ຂອງພັກ, ກົດໝາຍ ແລະ ນິຕິກຳຕ່າງໆ ຂອງລັດ ແລະ ຂອງກະຊວງ ວາງອອກໃຫ້ໄດ້ຮັບຜົນດີ;
2. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ, ສ້າງ, ປັບປຸງນິຕິກຳຕ່າງໆ ຮັບໃຊ້ທາງດ້ານວິຊາການ ກ່ຽວກັບວຽກງານຂຶ້ນທະບຽນອອກໃບຕາດິນ ລວມທັງວຽກງານປະຊາສຳພັນ ພາຍໃນ ແລະ ພາຍນອກ ເຂດທີ່ດິນປ່າໄມ້, ການຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງ ສິດນຳໃຊ້ທີ່ດິນ, ກຳມະສິດຫ້ອງຊຸດໃນຄອນໂດມິນຽມ, ວຽກງານປະເມີນລາຄາທີ່ດິນ, ວຽກງານຄຸ້ມຄອງສຳມະໂນຕອນດິນ ແລະ ວຽກງານຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ເພື່ອນຳສະເໜີຂັ້ນເທິງພິຈາລະນາຮັບຮອງ;
3. ສັງລວມ ແລະ ສະຫຼຸບລາຍງານ ການຂຶ້ນທະບຽນອອກໃບຕາດິນ, ການຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງສິດ ນຳໃຊ້ທີ່ດິນ, ກຳມະສິດຫ້ອງຊຸດໃນຄອນໂດມິນຽມ ແລະ ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ, ວຽກງານການປະເມີນລາຄາທີ່ດິນ, ສຳມະໂນຕອນ ແລະ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້;
4. ຊຸກຍູ້ຕິດຕາມ, ສ້າງ ແລະ ປັບປຸງ ເຂດປະເມີນລາຄາທີ່ດິນ, ແຜນທີ່ເຂດປະເມີນລາຄາທີ່ດິນ ແລະ ລະບົບປະເມີນລາຄາທີ່ດິນທັນສະໄໝ ເພື່ອເປັນບ່ອນອີງໃນການເກັບອາກອນທີ່ດິນ, ການປະຕິບັດນະໂຍບາຍທັນສິດນຳໃຊ້ທີ່ດິນຂອງລັດ, ການທົດແທນຄ່າເສຍຫາຍຈາກການໂອນສິດນຳໃຊ້ທີ່ດິນຄືນ, ການຂາຍສິດນຳໃຊ້ທີ່ດິນຕາມຄຳຕັດສິນຂອງສານ, ການຊື້ ຂາຍ, ແລກປ່ຽນສິດນຳໃຊ້ທີ່ດິນ, ການເອົາທີ່ດິນເຂົ້າເປັນຮຸ້ນ ແລະ/ຫຼື ເປັນຫຼັກຊັບຄ້ຳປະກັນ ແລະ ກໍລະນີອື່ນ;
5. ຄຸ້ມຄອງ, ຕິດຕາມ ນັກປະເມີນປະເມີນລາຄາທີ່ດິນ ທີ່ສັງກັດຢູ່ ບໍລິສັດ ທີ່ໄດ້ອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບການປະເມີນລາຄາທີ່ດິນ ລວມທັງນັກປະເມີນອິດສະລະ;
6. ຈົດທະບຽນນິຕິກຳ ກ່ຽວກັບສັນຍາ ຂອງບັນດາໂຄງການ ເຊົ່າ ແລະ ສຳປະທານ ທີ່ດິນຂອງລັດ;
7. ຕິດຕາມຊຸກຍູ້, ກວດກາ ແລະ ສະຫຼຸບລາຍງານ ການຂຶ້ນທະບຽນອອກໃບຕາດິນ ລວມທັງວຽກງານປະຊາສຳພັນຢູ່ພາຍໃນ ແລະ ນອກ ເຂດທີ່ດິນປ່າໄມ້, ການຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ, ກຳມະສິດຫ້ອງຊຸດໃນຄອນໂດມິນຽມ, ຈົດທະບຽນ ຊື້-ຂາຍ ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ, ວຽກງານການປະເມີນລາຄາທີ່ດິນ ໃນຂອບເຂດທົ່ວປະເທດ;
8. ໃຫ້ການຝຶກອົບຮົມ ກ່ຽວກັບວຽກງານຂຶ້ນທະບຽນອອກໃບຕາດິນ ລວມທັງວຽກງານປະຊາສຳພັນຢູ່ພາຍໃນ ແລະ ນອກ ເຂດທີ່ດິນປ່າໄມ້, ການຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງ ສິດນຳໃຊ້ທີ່ດິນກຳມະສິດຫ້ອງຊຸດໃນຄອນໂດມິນຽມ, ຈົດທະບຽນ ຊື້-ຂາຍ ສິດນຳໃຊ້ທີ່ດິນຈັດສັນຂອງລັດແບບມີກຳນົດ, ວຽກງານການປະເມີນລາຄາທີ່ດິນ ແລະ ວຽກງານຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
9. ຄົ້ນຄ້ວາ ແລະ ແກ້ໄຂ ຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບທີ່ດິນ ລະຫວ່າງ ບຸກຄົນ ແລະ ນິຕິບຸກຄົນ;
10. ເປັນກອງເລຂາຮັບຜິດຊອບວຽກງານຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້;
11. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງພະແນກຄຸ້ມຄອງທີ່ດິນລັດ**

ພະແນກຄຸ້ມຄອງທີ່ດິນລັດ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍ, ຍຸດທະສາດ, ມະຕິ, ຄໍາສັ່ງຂອງພັກ, ກົດໝາຍ ແລະ ນິຕິກໍາຕ່າງໆຂອງລັດ ແລະ ຂອງກະຊວງ ວາງອອກໃຫ້ໄດ້ຮັບຜົນດີ;
2. ຕິດຕາມ, ໂຄສະນາ, ເຜີຍແຜ່ ແລະ ສ້າງຈິດສໍານຶກ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບນະໂຍບາຍ, ກົດໝາຍ ແລະ ນິຕິກໍາຕ່າງໆ ກ່ຽວກັບທີ່ດິນ ຕາມທິດສ້າງລັດແຫ່ງກົດໝາຍ;
3. ເປັນໃຈກາງເກັບກໍາຂໍ້ມູນ, ຂຶ້ນບັນຊີ ແລະ ຄຸ້ມຄອງການນໍາໃຊ້ຖານຂໍ້ມູນທີ່ດິນຂອງລັດ ທຸກປະເພດຢ່າງລວມສູນ ທີ່ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການປົກຄອງທ້ອງຖິ່ນ ລວມທັງບຸກຄົນ, ນິຕິບຸກຄົນ, ລວມໝູ່ ແລະ ທີ່ດິນທີ່ສານຕັດສິນ ໃຫ້ເປັນຂອງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ;
4. ປະສານສົມທົບກັບກະຊວງ, ຂະແໜງການ, ອົງການຈັດຕັ້ງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການສ້າງຍຸດທະສາດ ແລະ ແຜນການນໍາໃຊ້ທີ່ດິນຂອງຕົນ;
5. ຄົ້ນຄວ້ານໍາສະເໜີການມອບສິດນໍາໃຊ້ທີ່ດິນຂອງລັດ ແລະ ອອກໃບຕາດິນລັດຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ລວມໝູ່ ທີ່ຄຸ້ມຄອງນໍາໃຊ້ທີ່ດິນຂອງລັດ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ, ແຜນຍຸດທະສາດ ແລະ ແຜນການນໍາໃຊ້ທີ່ດິນຂອງຂະແໜງການ ລວມທັງທີ່ດິນທີ່ສານຕັດສິນຮິບເປັນຂອງລັດ ຫຼື ໃຫ້ລັດເປັນຜູ້ຄຸ້ມຄອງ;
6. ເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ, ກວດກາ, ເກັບກໍາຂໍ້ມູນ, ປະກອບຄໍາເຫັນ ແລະ ການນໍາໃຊ້ທີ່ດິນຂອງລັດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ເພື່ອໃຫ້ເຊົ່າ ແລະ ສໍາປະທານທີ່ດິນ ແລະ ໂຄງການລົງທຶນພັດທະນາ ໃນຂອບເຂດທົ່ວປະເທດ;
7. ຕິດຕາມ, ກວດກາ, ຄຸ້ມຄອງ ການນໍາໃຊ້ຖານຂໍ້ມູນ ການເຊົ່າ ແລະ ສໍາປະທານທີ່ດິນຂອງລັດ ແລະ ລາຍງານທາງດ້ານວິຊາການ ເພື່ອສະເໜີຕໍ່ຂັ້ນເທິງ ກ່ຽວກັບການໂຈະ, ການຖອນສິດເຊົ່າ ແລະ ສໍາປະທານທີ່ດິນຂອງລັດ ທີ່ນໍາໃຊ້ບໍ່ຖືກເປົ້າໝາຍ, ການທວງຄືນ ແລະ ການລຶບລ້າງສິດຄອບຄອງ, ການຖອນສິດນໍາໃຊ້ທີ່ດິນຂອງລັດ ຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ບໍ່ມີການນໍາໃຊ້ຕົວຈິງ ຫຼື ນໍາໃຊ້ບໍ່ຖືກຕ້ອງຕາມກົດໝາຍ ຫຼື ສັນຍາ;
8. ຄົ້ນຄ້ວາ ແລະ ນໍາສະເໜີ ການແກ້ໄຂຊົດເຊີຍຜົນກະທົບຈາກ ໂຄງການເຊົ່າ ແລະ ສໍາປະທານທີ່ດິນຂອງລັດ ພ້ອມທັງເຂົ້າຮ່ວມກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ໃນການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການເຊົ່າ ແລະ ສໍາປະທານທີ່ດິນ, ຄົ້ນຄວ້າຄໍາຮ້ອງ ຫຼື ຄໍາສະເໜີ ຂອງນັກລົງທຶນ ຫຼື ຜູ້ປະກອບການ ເພື່ອສະເໜີຂັ້ນເທິງ ພິຈາລະນາຕໍ່ການເຊົ່າ ຫຼື ສໍາປະທານທີ່ດິນ ຕາມລະບຽບກົດໝາຍ;
9. ຄຸ້ມຄອງ, ສ້າງຄວາມເຂັ້ມແຂງ ໃນການນໍາໃຊ້ຂໍ້ມູນ ເຊົ່າ ແລະ ສໍາປະທານທີ່ດິນ ເພື່ອຕິດຕາມ, ກວດກາການນໍາໃຊ້ ການເຊົ່າ ແລະ ສໍາປະທານທີ່ດິນ ໃນແຕ່ລະໄລຍະ;
10. ເປັນໃຈກາງປະສານສົມທົບກັບກະຊວງ ແລະ ຄະນະກໍາມະການປົກຄອງ ຂັ້ນທ້ອງຖິ່ນ ໃນການກວດກາ ແລະ ທວງຄືນທີ່ດິນລັດ ທີ່ຖືກຄອບຄອງ ບໍ່ຖືກຕ້ອງຕາມກົດໝາຍ ແລະ ສະເໜີຖອນຄືນ ຈາກບຸກຄົນ ແລະ ການຈັດຕັ້ງ;
11. ຄົ້ນຄວ້າຄໍາຮ້ອງ, ຄໍາສະເໜີ, ເຂົ້າຮ່ວມ ແລະ ປະກອບຄໍາເຫັນ ກ່ຽວກັບຂໍ້ຂັດແຍ່ງທີ່ດິນຂອງລັດ ລະຫວ່າງລັດກັບລັດ, ລັດກັບບຸກຄົນ ໃນການແກ້ໄຂຂໍ້ຂັດແຍ່ງທີ່ດິນ ທີ່ມີລັກສະນະບໍລິຫານທີ່ພົວພັນເຖິງການນໍາໃຊ້ທີ່ດິນຂອງລັດ ໃນຂອບເຂດທົ່ວປະເທດ;

12. ຄົ້ນຄວ້ານຳສະເໜີທີ່ດິນຈັດສັນຂອງລັດ ເພື່ອປຸກທີ່ຢູ່ອາໄສ ແລະ ຊື້-ຂາຍ ສິດນຳໃຊ້ທີ່ດິນຂອງລັດ ແບບມີກຳນົດ ໃຫ້ສະເພາະພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ແລະ ຂາຍສິດນຳໃຊ້ທີ່ດິນຈັດສັນຂອງລັດ ແບບມີກຳນົດໃຫ້ກັບຄົນຕ່າງປະເທດ ແລະ ຄົນຕ່າງປະເທດ ທີ່ມີເຊື້ອຊາດລາວ;
13. ສະຫຼຸບ, ລາຍງານ ການປະເມີນຜົນການນຳໃຊ້ທີ່ດິນຂອງລັດ ແລະ ສະເໜີແຜນການນຳໃຊ້ທີ່ດິນຂອງລັດ ຂອງບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ;
14. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 11 ໜ້າທີ່ ຂອງພະແນກຄຸ້ມຄອງທຸລະກິດທີ່ດິນ**

ພະແນກຄຸ້ມຄອງທຸລະກິດທີ່ດິນ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍ, ຍຸດທະສາດ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍ ແລະ ນິຕິກຳຕ່າງໆຂອງລັດ ແລະ ຂອງກະຊວງ ວາງອອກໃຫ້ໄດ້ຮັບຜົນດີ;
2. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ, ສ້າງ, ປັບປຸງ, ໂຄສະນາ, ເຜີຍແຜ່ ແລະ ສ້າງຈິດສຳນຶກໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບນະໂຍບາຍ, ກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວກັບທຸລະກິດທີ່ດິນ, ຄອນໂດມິນຽມ ແລະ ນິຕິກຳທີ່ຕິດພັນກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
3. ເປັນໃຈກາງໃນການສັງລວມ ແລະ ເກັບກຳຂໍ້ມູນ ຂອງບັນດາຫົວໜ່ວຍທຸລະກິດ ແລະ ທຸລະກິດຄອນໂດມິນຽມ ຢ່າງລວມສູນ;
4. ຄົ້ນຄ້ວາຄຳຮ້ອງການສະເໜີຂໍໃບອະນຸຍາດຳເນີນທຸລະກິດ ກ່ຽວກັບທີ່ດິນ ແລະ ຄອນໂດມິນຽມ ພ້ອມທັງການຂໍອະນຸມັດອອກໃບອະນຸຍາດ ດຳເນີນທຸລະກິດດັ່ງກ່າວ ຕາມນິຕິກຳ, ລະບຽບການ ແລະ ກົດໝາຍທີ່ກຳນົດໄວ້;
5. ປະສານສົມທົບກັບສຳນັກງານຂໍ້ມູນຕ້ານການຟອກເງິນ ທະນາຄານແຫ່ງ ສປປລາວ ປະຕິບັດຕາມແຜນດຳເນີນງານແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມສ່ຽງດ້ານການຟອກເງິນ ຂອງຂະແໜງການອະສັງຫາລິມະຊັບ (ທຸລະກິດທີ່ດິນ ແລະ ຄອນໂດມິນຽມ) ແລະ ກົມໃຫຍ່ສັນຕິບານ, ກະຊວງປ້ອງກັນຄວາມສະຫງົບ ເພື່ອກວດສອບປະຫວັດອາຊະຍາກຳ ທີ່ພົວພັນກັບການຟອກເງິນ ຫຼື ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການເກັບກຳຂໍ້ມູນການດຳເນີນທຸລະກິດ ກ່ຽວກັບທີ່ດິນ ແລະ ທຸລະກິດຄອນໂດມິນຽມ ເພື່ອລາຍງານການນຳກະຊວງ ເປັນແຕ່ລະໄລຍະ;
7. ຕິດຕາມ, ກວດກາ ບັນດາຫົວໜ່ວຍທຸລະກິດ ທີ່ໄດ້ຮັບໃບອະນຸຍາດດຳເນີນດຳເນີນທຸລະກິດ ກ່ຽວກັບທີ່ດິນ, ທຸລະກິດຄອນໂດມິນຽມ ແລະ ການຂຶ້ນທະບຽນທີ່ດິນປຸກສ້າງຄອນໂດມິນຽມ ແລະ ຫ້ອງຊຸດຄອນໂດມິນຽມ ຂັ້ນສູນກາງ ແລະ ທ້ອງຖິ່ນ ພ້ອມທັງສະເໜີໂຈະ, ຖອນ, ໃບອະນຸຍາດ ດຳເນີນທຸລະກິດທີ່ດິນ ແລະ ທຸລະກິດຄອນໂດມິນຽມ;
8. ຝຶກອົບຮົມໃຫ້ຂັ້ນສູນກາງ ແລະ ທ້ອງຖິ່ນ ກ່ຽວກັບວຽກງານທຸລະກິດກ່ຽວກັບທີ່ດິນ, ທຸລະກິດຄອນໂດມິນຽມ ແລະ ວຽກງານທີ່ຕິດພັນກັບການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຮ່ວມກັບສຳນັກງານຂໍ້ມູນຕ້ານການຟອກເງິນ;
9. ສະຫຼຸບ, ລາຍງານ ຜົນການດຳເນີນງານ ຂອງທຸລະກິດທີ່ດິນ ແລະ ທຸລະກິດຄອນໂດມິນຽມ ຂັ້ນສູນກາງ ແລະ ທ້ອງຖິ່ນ ແຕ່ລະໄລຍະ;
10. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 12 ໜ້າທີ່ ຂອງສູນຂໍ້ມູນຂ່າວສານທີ່ດິນ**

ສູນຂໍ້ມູນຂ່າວສານທີ່ດິນ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍ, ຍຸດທະສາດ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍ ແລະ ນິຕິກຳຕ່າງໆ ຂອງລັດ ແລະ ຂອງກະຊວງ ວາງອອກໃຫ້ໄດ້ຮັບຜົນດີ;
2. ຄົ້ນຄວ້າສ້າງ, ປັບປຸງນິຕິກຳ ລະບຽບການ ແລະ ກົນໄກຕິດຕາມກວດກາລະບົບຂໍ້ມູນ-ຂ່າວສານທີ່ດິນໃນແຕ່ລະເຂດ, ແຕ່ລະປະເພດທີ່ດິນ ໃຫ້ມີຄວາມທັນສະໄໝ ແລະ ໄດ້ມາດຕະຖານ;
3. ສ້າງ ແລະ ຄຸ້ມຄອງ ລະບົບຂໍ້ມູນ-ຂ່າວສານທີ່ດິນ (ຂໍ້ມູນທະບຽນທີ່ດິນ, ຂໍ້ມູນໃບຕາດິນ, ຂໍ້ມູນໃບຢັ້ງຢືນການນຳໃຊ້ທີ່ດິນ, ຂໍ້ມູນສຳມະໂນຕອນດິນ, ອະສັງຫາລິມະຊັບ, ຂໍ້ມູນໂຄງການເຊົ່າ ແລະ ສຳປະທານທີ່ດິນ, ອື່ນໆ) ໃຫ້ໄດ້ມາດຕະຖານ;
4. ຄຸ້ມຄອງລະບົບຮັກສາຄວາມປອດໄພ ແລະ ລະບົບສຳຮອງຂໍ້ມູນ ທີ່ກ່ຽວຂ້ອງກັບທີ່ດິນທີ່ນຳໃຊ້ພາຍໃນກົມ ແລະ ທ້ອງຖິ່ນ ຕາມສາຍຕັ້ງຂອງຕົນ;
5. ຮ່ວມມືກັບພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ໃນການຄຸ້ມຄອງ ແລະ ໃຫ້ບໍລິການຂໍ້ມູນຂ່າວສານ ກ່ຽວກັບທີ່ດິນ;
6. ຮ່ວມມືກັບພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ໃນການຄຸ້ມຄອງ, ຢັ້ງຢືນ ແລະ ໃຫ້ບໍລິການຂໍ້ມູນຂ່າວສານ ກ່ຽວກັບທີ່ດິນ ໃຫ້ອົງການຈັດຕັ້ງພາກລັດ, ພາກເອກະຊົນ ແລະ ສັງຄົມ;
7. ປະສານສົມທົບກັບພະແນກທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງລະບົບຂໍ້ມູນສຳມະໂນທີ່ດິນ ໃຫ້ໄດ້ມາດຕະຖານ, ມີລະບົບເຄືອຂ່າຍ ສາມາດເຊື່ອມຕໍ່ຂໍ້ມູນກັບບັນດາຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ;
8. ຝຶກອົບຮົມ ກ່ຽວກັບວຽກງານຄຸ້ມຄອງສຳມະໂນທີ່ດິນ ແລະ ໄອທີ ຂັ້ນສູນກາງ ແລະ ທ້ອງຖິ່ນ ຕາມການມອບໝາຍຂອງຂັ້ນເທິງ;
9. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຕິດຕາມ ແລະ ກວດກາການເຊົ່າ ແລະ ສຳປະທານທີ່ດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ຖືກຕາມລະບຽບກົດໝາຍ;
10. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 13 ໜ້າທີ່ ຂອງສູນສຳຫຼວດ-ວັດແທກ ແລະ ແຜນທີ່**

ສູນສຳຫຼວດ-ວັດແທກ ແລະ ແຜນທີ່ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍ, ຍຸດທະສາດ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍແລະນິຕິກຳຕ່າງໆ ຂອງລັດ ແລະ ຂອງກະຊວງ ວາງອອກໃຫ້ໄດ້ຮັບຜົນດີ;
2. ປະສານສົມທົບກັບ ພາກສວນກ່ຽວຂ້ອງ ຄົ້ນຄວ້າ, ສ້າງ, ປັບປຸງນິຕິກຳຕ່າງໆ ຮັບໃຊ້ທາງດ້ານວິຊາການກ່ຽວກັບວຽກງານ ການຄຸ້ມຄອງ ແລະ ບໍລິການ ສຳຫຼວດວັດແທກທີ່ດິນ, ສ້າງແຜນຕາດິນ, ສ້າງແຜນທີ່ພາບຖ່າຍດ້ວຍ UAV/Drone ແລະ ພາບຖ່າຍດາວທຽມ;
3. ຄຸ້ມຄອງ ແລະ ໃຫ້ບໍລິການ ລະບົບເຄືອຂ່າຍສະຖານີອ້າງອີງ ການສຳຫຼວດ-ວັດແທກ ແບບຕໍ່ເນື່ອງ (CORS) ແລະ ຄຸ້ມຄອງເຄື່ອງມືອຸປະກອນການສຳຫຼວດ-ວັດແທກທີ່ດິນ ໃນຂອບເຂດທົ່ວປະເທດ;
4. ຄຸ້ມຄອງມາດຖານ ແລະ ໃຫ້ບໍລິການ ພາບຖ່າຍດາວທຽມ, ພາບຖ່າຍທາງອາກາດ ແລະ ສ້າງແຜນທີ່ລະບົບຂໍ້ມູນຂ່າວສານພູມສາດ ແລະ ສືບຢັ້ງທາງໄກ ເພື່ອປະເມີນການນຳໃຊ້ທີ່ດິນ ໃນແຕ່ລະໄລຍະ (ພາບຖ່າຍດາວທຽມຕິດພັນກັບວຽກສູນສຳຫຼວດປ່າໄມ້);

5. ເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອສໍາຫຼວດ-ວັດແທກ ແລະ ສ້າງແຜນທີ່ຕາດິນ ໃນຂອບເຂດທົ່ວປະເທດ;
6. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ດໍາເນີນການສໍາຫຼວດ, ເກັບກໍາຂໍ້ມູນທີ່ດິນ, ທີ່ຢູ່ໃນການຄຸ້ມຄອງການນໍາໃຊ້ທີ່ດິນຂອງບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອຂຶ້ນສໍາມະໂນທີ່ດິນ;
7. ໃຫ້ບໍລິການສໍາຫຼວດ-ວັດແທກ ແລະ ສ້າງແຜນທີ່ຕາດິນ, ສໍາຫຼວດ-ວັດແທກທີ່ດິນຄືນໃໝ່, ສໍາຫຼວດ-ວັດແທກພື້ນທີ່ການເຊົ່າ ແລະ ສໍາປະທານທີ່ດິນ ແລະ ອອກໃບຢັ້ງຢືນການສໍາຫຼວດ-ວັດແທກທີ່ດິນ;
8. ປະສານສົມທົບກັບທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ດໍາເນີນການປັບປຸງແຜນທີ່ຕາດິນ ຈາກລະບົບເຈ້ຍ ເປັນລະບົບແຜນທີ່ຕາດິນໃນຮູບແບບດິຈິຕອນ ພ້ອມທັງຫັນປ່ຽນລະບົບແຜນທີ່ຕາດິນ (ເກົ່າ) Datrum Lao 97 ເປັນ Datrum WGS 84 ໃນຂອບເຂດທົ່ວປະເທດ;
9. ກວດກາ ແລະ ປະເມີນຜົນ ດ້ານເຕັກນິກການສໍາຫຼວດ-ວັດແທກ ແລະ ສ້າງແຜນທີ່ຕາດິນ ໃນຂອບເຂດທົ່ວປະເທດ ພ້ອມທັງຄຸ້ມຄອງ ແລະ ອອກເອກະສານຢັ້ງຢືນ ນັກສໍາຫຼວດ-ວັດແທກທີ່ດິນ ທັງພາກລັດ ແລະ ເອກະຊົນ;
10. ຝຶກອົບຮົມ ກ່ຽວກັບວຽກງານສໍາຫຼວດວັດແທກ, ສ້າງແຜນທີ່ຕາດິນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ;
11. ເປັນຫົວໜ່ວຍໃຫ້ບໍລິການ ໃນການສໍາຫຼວດ-ວັດແທກ ແລະ ສ້າງແຜນທີ່ ໃຫ້ພາກລັດ, ເອກະຊົນ ແລະ ຜູ້ທີ່ມີຄວາມສົນໃຈ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 14 ໜ້າທີ່ ຂອງສູນພັດທະນາຄຸນນະພາບດິນ ແລະ ຝຸ່ນ**

ສູນພັດທະນາຄຸນນະພາບດິນ ແລະ ຝຸ່ນ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍ, ຍຸດທະສາດ, ມະຕິ, ຄໍາສັ່ງຂອງພັກ, ກົດໝາຍ ແລະ ນິຕິກໍາຕ່າງໆ ຂອງລັດ ແລະ ຂອງກະຊວງ ວາງອອກໃຫ້ໄດ້ຮັບຜົນດີ;
2. ຟື້ນຟູ, ປັບປຸງ, ປ້ອງກັນການເຊື່ອມໂຊມດິນ, ດິນບໍລິເວນນໍ້າ ແລະ ດິນຖ່ານຕົມ;
3. ຄົ້ນຄວ້າຮູບແບບການຜະລິດຝຸ່ນ, ກໍານົດມາດຕະຖານຝຸ່ນ, ອອກໃບຢັ້ງຢືນຄຸນນະພາບຝຸ່ນທີ່ຜ່ານການຢັ້ງຢືນການທົດສອບກັບພືດ;
4. ຄຸ້ມຄອງ, ຊຸກຍູ້ ແລະ ສົ່ງເສີມ ໂຮງງານຜະລິດຝຸ່ນຊີວະພາບ, ຝຸ່ນອົງຄະທາດ ແລະ ໂຮງງານຝຸ່ນວິທະຍາສາດ; ສ້າງແຜນການດຸ່ນດ່ຽງຝຸ່ນ;
5. ຊຸກຍູ້, ສົ່ງເສີມ ພັດທະນາທີ່ດິນເຂດພື້ນທີ່ຄ້ອຍຊັນ ໂດຍການຄົ້ນຄ້ວາ ແລະ ພັດທະນາເຕັກນິກການ ນໍາໃຊ້ດິນຄ້ອຍຊັນ, ສາທິດຮູບແບບການນໍາໃຊ້ທີ່ດິນຄ້ອຍຊັນ, ເຜີຍແຜ່ການນໍາໃຊ້ທີ່ດິນຄ້ອຍຊັນ;
6. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທົດລອງ ແລະ ສາທິດ ການນໍາໃຊ້ຝຸ່ນ ແລະ ເຕັກນິກການນໍາໃຊ້ຝຸ່ນ ເພື່ອປະເມີນຄຸນນະພາບດິນ ແລະ ປັບປຸງດິນນາ ແລະ ຕິດຕາມ, ກວດກາ ການນໍາໃຊ້ຝຸ່ນ;

7. ສ້າງຮູບແບບພັດທະນາດິນກະສິກຳໃນເຂດພື້ນທີ່ແຫ້ງແລ້ງ, ສຶກສາ ແລະ ອອກແບບພື້ນທີ່ການຜະລິດ ແລະ ຈັດການດິນ, ນ້ຳ ແລະ ຝຸ່ນ ເພື່ອຍົກສະມັດຕະພາບການຜະລິດ;
8. ຄົ້ນຄວ້ານຳສະເໜີ ບົດສະເໜີສ້າງຕັ້ງໂຮງງານ, ບົດວິພາກເສດຖະກິດ ແລະ ກວດກາເຕັກນິກການຜະລິດ ແລະ ສູດຝຸ່ນ;
9. ສ້າງຄວາມເຂັ້ມແຂງໃຫ້ພະນັກງານວິຊາການ ຂັ້ນແຂວງ ແລະ ເມືອງ ກ່ຽວກັບການປັບປຸງດິນ, ການຜະລິດຝຸ່ນ, ການນຳໃຊ້ຝຸ່ນ ແລະ ການແກ້ໄຂບັນຫາຂອງດິນຕໍ່ການປູກພືດ ແລະ ສ້າງອາສາສະໝັກໝໍດິນ (ສ້າງຊາວກະສິກອນ ໃຫ້ມີຄວາມຊຳນານດ້ານການນຳໃຊ້ດິນ ແລະ ຝຸ່ນ);
10. ເປັນໃຈກາງໃນການຂຶ້ນບັນຊີ ແລະ ສຳຫຼວດ, ກຳນົດຂອບເຂດ ແລະ ສ້າງແຜນຄຸ້ມຄອງນຳໃຊ້ເຂດດິນຖ່ານຕົມ;
11. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 15 ໜ້າທີ່ ຂອງສູນວິໄຈດິນ**

ສູນວິໄຈດິນ ມີໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍ, ຍຸດທະສາດ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍ ແລະ ນິຕິກຳຕ່າງໆ ຂອງລັດ ແລະ ກະຊວງ ວາງອອກໃຫ້ໄດ້ຮັບຜົນດີ;
2. ວິໄຈດ້ານເຄມີຂອງດິນ ແລະ ຝຸ່ນ, ທາດອາຫານພືດ ແລະ ປັດໄຈທີ່ກ່ຽວຂ້ອງກັບຄວາມເປັນປະໂຫຍດກັບອາຫານພືດ, ສິ່ງແວດລ້ອມດິນ ເຊັ່ນ: ທາດໂລຫະໜັກ ແລະ ສານພິດຕົກຄ້າງໃນດິນ;
3. ວິໄຈດ້ານຟີຊິກຂອງດິນ ແລະ ຝຸ່ນ ເປັນຕົ້ນຄວາມໜາແໜ້ນ, ຄວາມຜຸພຸ່ຍ, ເນື້ອດິນ, ການຊຶມນ້ຳ ຂອງດິນ, ນ້ຳທີ່ເປັນປະໂຫຍດໃນດິນ ແລະ ຄວາມຊຸ່ມໃນດິນ;
4. ວິໄຈດ້ານຊີວະວິທະຍາຂອງດິນ ແລະ ຝຸ່ນ ເປັນຕົ້ນວິໄຈຈຸລິນຊີ, ສິ່ງທີ່ມີຊີວິດໃນດິນ, ຈຳແນກປະເພດສິ່ງທີ່ມີຊີວິດໃນດິນ, ຄົ້ນຄ້ວາຄັດເລືອກຈຸລິນຊີ ທີ່ເປັນປະໂຫຍດໃນການຍ່ອຍສະຫຼາຍເສດພືດຈຸລິນຊີທີ່ສາມາດສ້າງທາດອາຫານພືດ;
5. ສ້າງຄວາມເຂັ້ມແຂງຫ້ອງວິໄຈດິນ ພາກເໜືອ, ພາກກາງ ແລະ ພາກໃຕ້ ພ້ອມທັງຢັ້ງຢືນຜົນຂອງການວິໄຈ;
6. ຈຸດປະສານງານເຄືອຂ່າຍຫ້ອງວິໄຈ ແລະ ສະໜອງຂໍ້ມູນປະສານຫ້ອງວິໄຈດິນ ພາຍໃນປະເທດ, ອາຊີ ແລະ ນາໆຊາດ; ພັດທະນາມາດຕະຖານການວິໄຈດິນ;
7. ຄຸ້ມຄອງ, ຕິດຕາມ, ກວດກາ ຫ້ອງວິໄຈດິນ ພາກເໜືອ, ພາກກາງ ແລະ ພາກໃຕ້, ວິທະຍາໄລ ລວມທັງຫ້ອງວິໄຈດິນເອກະຊົນ;
8. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 16 ຫຼັກການ

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມ ຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ແລະ ພາລະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ; ນໍາເອົາແນວທາງນະໂຍບາຍ ຂອງພັກ-ລັດຖະບານ ແລະ ນໍາເອົາແຜນການປະຈໍາປີ, ແຜນ 5 ປີ ຂອງກະຊວງກະສິກໍາ ແລະ ສິ່ງແວດລ້ອມ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 17 ແບບແຜນວິທີເຮັດວຽກ

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍຂອງວຽກງານ ພ້ອມທັງປະຕິບັດລາຍງານສ່ອງແສງ ຢ່າງເຂັ້ມງວດ;
3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ, ຄະນະນໍາແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄໍາເຫັນ ໃນການຈັດຕັ້ງປະຕິບັດແຜນການ ເປັນແຕ່ລະໄລຍະ;
4. ຫົວໜ້າກົມ ມີຄວາມຮັບຜິດຊອບໂດຍກົງຕໍ່ ຄະນະປະຈໍາພັກ, ຄະນະພັກ, ລັດຖະມົນຕີກະຊວງກະສິກໍາ ແລະ ສິ່ງແວດລ້ອມ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງຕົນ, ຮອງຫົວໜ້າກົມ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍ ຂອງຫົວໜ້າກົມ;
5. ຫົວໜ້າກົມ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສໍາຄັນ, ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມ ທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານ ທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງ ໃຫ້ຫົວໜ້າກົມ ຊາບ ພາຍຫຼັງກັບມາປະຈໍາການ;
6. ປະຕິບັດລະບອບປະຊຸມ ປະຈໍາເດືອນ, 3 ເດືອນ, 6 ເດືອນ, ປະຈໍາປີ ແລະ ປະຕິບັດລະບອບລາຍງານ ໃຫ້ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນປົກກະຕິ;
7. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 18 ງົບປະມານ, ເຄື່ອງແບບ, ເຄື່ອງໝາຍ, ກາໝາຍ ແລະ ຕາປະທັບ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ມີງົບປະມານ, ເຄື່ອງແບບ, ເຄື່ອງໝາຍ, ກາໝາຍ ແລະ ຕາປະທັບ ເພື່ອໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 19 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຂະແໜງສາຍຕັ້ງຂັ້ນທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 20 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ ແລະ ນຳໃຊ້ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ສະບັບເລກທີ 0196/ກປ, ລົງວັນທີ 27 ມັງກອນ 2022 ແລະ ກົມທີ່ດິນ ສະບັບເລກທີ 0488/ກຊສ, ລົງວັນທີ 15 ມີນາ 2023.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ລັດຖະມົນຕີ

**ປອ. ລິນຄຳ ດວງສະຫວັນ**